ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 4477/ສສກ.ສຮ.11

ນະຄອນຫຼວງວຽງຈັນ, ວັນທີ 22 NOV 2011

# ຂໍ້ຕົກລົງຂອງ ລັດຖະມົນຕີ

## ວ່າດ້ວຍການອະນຸມັດນຳໃຊ້

## ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ 2011-2015

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງ ວັນທີ 7 ກັນຍາ 2011.

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍ ການສຶກສາຮຽນຮ່ວມ ສະບັບເລກທີ 509/ນຍ ລົງວັນທີ 07 ທັນວາ 2010.

ເຫັນຕາມ: ການສະເໜີ ຂອງ ສູນການສຶກສາຮຽນຮ່ວມ.

**ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ**

**ຈຶ່ງຕົກລົງ:**

ມາດຕາ 1: ອະນຸມັດນຳໃຊ້ ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ ແຕ່ປີ 2011 ຫາປີ 2015 ຢ່າງເປັນທາງການ.

ມາດຕາ 2: ມອບໃຫ້ ສູນການສຶກສາຮຽນຮ່ວມ ເປັນເຈົ້າການ ປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍ, ຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ ແຕ່ປີ 2011 ຫາປີ 2015 ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ຂັ້ນເທິງຊາບ ເປັນແຕ່ລະໄລຍະ.

ມາດຕາ 3: ບັນດາກົມ, ຫ້ອງການກົມ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ**

ດຣ ພັນຄຳ ວິພາວັນ